ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 48 /ຈຂ.ອປ

ອັດຕະປື, ວັນທີ 14 ມັງກອນ 2020

# ບົດລາຍງານ

**ຮຽນ:** ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື !

**ເລື່ອງ:** ຄຳຕອບກ່ຽວກັບການສະເໜີຂອງປະຊາຊົນຜ່ານທາງສາຍດ່ວນ 1516 ຂອງລັດຖະບານ.

- ອີງຕາມ ກົດໝາຍປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ໜັງສືທາງລັດຖະການ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 811/ຫສນຍ.ກປຜ, ລົງວັນທີ 14 ພຶດສະພາ 2019 ວ່າດ້ວຍການສັງລວມຄຳສະເໜີຂອງປະຊາຊົນ ຜ່ານທາງໂທລະສັບສາຍດ່ວນ 1516 ຂອງລັດຖະບານ.
- ອີງຕາມ ໜັງສືລາຍງານຂອງອົງການກວດກາແຂວງ ອັດຕະປື ລົງວັນທີ 8 ຕຸລາ 2019.

ແຂວງອັດຕະປື ຂໍຖືເປັນກຽດລາຍງານມາຍັງທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຊາບວ່າ: ກ່ຽວກັບການສະເໜີຂອງປະຊາຊົນ ຜ່ານທາງສາຍດ່ວນຂອງລັດຖະບານ ວ່າ: ມີພະນັກງານລັດ ຢູ່ພະແນກ ຍທຂ ແຂວງອັດຕະປື ໄດ້ເປີດບໍລິສັດໂດຍບໍ່ໃສ່ຊື່ຂອງຕົນ ແລະ ໄດ້ປະຕິບັດໂຄງການຂອງລັດ ບ່ອນທີ່ຕົນສັງກັດເປັນເຈົ້າຂອງໂຄງການ ໂດຍບໍ່ມີການປະມູນ ຫຼື ເປີດໂອກາດໃຫ້ບໍລິສັດອື່ນ ເຂົ້າມາມີສ່ວນຮ່ວມ. ວຽກງານດັ່ງກ່າວແຂວງໄດ້ມອບໃຫ້ພາກສ່ວນກ່ຽວຂ້ອງ ລົງໄປຕິດຕາມກວດກາ ແລະ ເຫັນວ່າ: ບໍ່ມີມູນຄວາມຈິງ. ສ່ວນການດຳເນີນທຸລະກິດແມ່ນຄອບຄົວ ແລະ ຜ່ານການກວດກາໃບທະບຽນວິສາຫະກິດ ແມ່ນອອກຊື່ແມ່ເຖົ້າ, ຊື່ອ້າຍ, ຊື່ນ້ອງ, ຊື່ພີ່ວ, ຊື່ເມຍ. ສະນັ້ນ; ການດຳເນີນທຸລະກິດ, ການບໍລິການ ແມ່ນຄວາມຮັບຜິດຊອບ ຂອງເຈົ້າຂອງທະບຽນວິສາຫະກິດ ທີ່ຖືກຕ້ອງຕາມລະບຽບການ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຊາບ ແລະ ມີທິດຊີ້ນຳຕາມສົມຄວນດ້ວຍ.

ເຈົ້າແຂວງອັດຕະປື.

ແຂວງອັດຕະປື

ເຈົ້າແຂວງອັດຕະປື

ເລັດ ໄຊຍະພອນ

**+ ບ່ອນນຳສົ່ງ:**

- ຫສນຍ 01 ສະບັບ.
- ຫ້ອງວ່າການແຂວງ 01 ສະບັບ.
- ສຳເນົາ 01 ສະບັບ.